# ມິຊຊາອາທິດທີ 29 ກຳນົດທຳມະດາ ປີ B
# ວັນອາທິດທີ 21 ຕຸລາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 35-45**

ໃນເວລານັ້ນ, ຢາໂກເບແລະຢວງບຸດຂອງເຊເບເດເຂົ້າມາຫາພຣະເຢຊູເຈົ້າທູນວ່າ: ພຣະອາຈານ, ໂຜດປະທານຕາມທີ່ພວກຂ້ານ້ອຍທັງສອງຈະຂໍ. ພຣະເຢຊູເຈົ້າກ່າວວ່າ: ພວກເຈົ້າຕ້ອງການໃຫ້ເຮົາທານສິ່ງໃດແກ່ພວກເຈົ້າ? ທັງສອງທູນຕອບວ່າ: ຂໍທານໃຫ້ພວກຂ້ານ້ອຍທັງສອງໄດ້ນັ່ງຂ້າງພຣະອົງ. ຜູ້ໜຶ່ງຢູ່ເບື້ອງຂວາແລະຜູ້ໜຶ່ງຢູ່ເບື້ອງຊ້າຍໃນສີມຸງຄຸນຂອງພຣະອົງ.

ພຣະເຢຊູເຈົ້າກ່າວວ່າ: ພວກເຈົ້າບໍ່ຮູ້ວ່າພວກເຈົ້າຂໍຫຍັງຊໍ້າ. ພວກເຈົ້າດື່ມຈອກທີ່ເຮົາຕ້ອງດື່ມແລະຮັບສິນລ້າງທີ່ເຮົາຕ້ອງຮັບນັ້ນໄດ້ບໍ? ທັງສອງທູນວ່າ: ພວກຂ້ານ້ອຍຮັບໄດ້. ພຣະເຢຊູເຈົ້າກ່າວວ່າ: ຈອກທີ່ເຮົາຈະດື່ມນັ້ນ, ພວກເຈົ້າກໍຈະດື່ມ; ແລະສິນລ້າງທີ່ເຮົາຈະຮັບນັ້ນພວກເຈົ້າກໍຈະຮັບດ້ວຍ. ແຕ່ເລື່ອງນັ່ງຢູ່ເບື້ອງຊ້າຍຫລືເບື້ອງຂວາຂອງເຮົານັ້ນ ບໍ່ແມ່ນໜ້າທີ່ຂອງເຮົາທີ່ຈະປະທານໃຫ້. ແຕ່ສຳລັບພວກທີ່ເພິ່ນໄດ້ກຳນົດໄວ້ແລ້ວເທົ່ານັ້ນ. ພວກສາວົກສິບເອັດຄົນໄດ້ຍິນກໍຢາກຮ້າຍຢາໂກເບແລະຢວງ.

ພຣະເຢຊູເຈົ້າຈຶ່ງຮຽກພວກສາວົກທັງໝົດມາກ່າວວ່າ: ພວກເຈົ້າຮູ້ວ່າໃນທ່າມກາງນາໆຊາດ, ຜູ້ທີ່ເຂົາຖືວ່າເປັນນາຍກໍໃຊ້ອຳນາດບັງຄັບບັນຊາ. ແລະຜູ້ທີ່ເປັນໃຫຍ່ກໍມັກສະແດງອຳນາດຂອງຕົນອອກມາ. ສຳລັບພວກເຈົ້າບໍ່ຕ້ອງເປັນດັ່ງນີ້, ຜູ້ໃດຢາກເປັນໃຫຍ່ໃນພວກເຈົ້າໃຫ້ທຳຕົນເປັນຄົນໃຊ້. ແລະຜູ້ໃດຢາກເປັນທີໜຶ່ງໃນພວກເຈົ້າ ກໍໃຫ້ທຳຕົນເປັນຂ້ອຍໃຊ້ຂອງຜູ້ອື່ນ.

ຍ້ອນວ່າບຸດມະນຸດບໍ່ໄດ້ສະເດັດມາໃນໂລກນີ້ເພື່ອໃຫ້ຜູ້ອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ແລະມອບຊີວິດຂອງຕົນເປັນການກູ້ໄຖ່ເອົາຄົນເປັນຈຳນວນມາກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 35-45**

ອາທິດແລ້ວນີ້ໃນພຣະວໍລະສານໄດ້ມີຊາຍໜຸ່ມຜູ້ໜຶ່ງເຂົ້າມາຖາມພຣະເຢຊູເຈົ້າກ່ຽວກັບວິທີການປະຕິບັດເພື່ອຈະໄດ້ມໍລະດົກອັນແມ່ນຊີວິດນິລັນດອນ. ແລະຄຳຕອບຂອງພຣະເຢຊູເຈົ້າຄື ໃຫ້ເຂົາໄປຂາຍທຸກສິ່ງທີ່ເຂົາມີ ແລ້ວນຳໄປທານໃຫ້ຄົນທຸກຈົນ. ຈາກນັ້ນ, ໃຫ້ຕິດຕາມພຣະອົງໄປ. ຄຳຕອບນີ້ບໍ່ໄດ້ມີໄວ້ສຳລັບແຕ່ຊາຍໜຸ່ມຮັ່ງມີນີ້ເທົ່ານັ້ນ ແຕ່ເປັນຄຳຕອບສຳລັບທຸກຄົນທີ່ຢາກຕິດຕາມພຣະເຢຊູເຈົ້າໄປເພື່ອຈະໄດ້ພົບຊີວິດນິລັນດອນ. ຄຳຕອບຂອງພຣະເຢຊູເຈົ້ານີ້ສຳລັບມະນຸດແລ້ວເປັນສິ່ງທີ່ຍາກໃນການປະຕິບັດເພາະມັນເໝືອນອູດຕົວໜຶ່ງທີ່ລອດເຂົ້າຮູເຂັມ. ແຕ່ສຳລັບຜູ້ທີ່ເຊື່ອໃນພຣະເຈົ້າ ທຸກສິ່ງເປັນໄປໄດ້.

ວັນອາທິດນີ້, ກໍມີຊາຍໜຸ່ມສອງຄົນເຂົ້າມາຖາມພຣະເຢຊູເຈົ້າກ່ຽວກັບການສະຖາປະນາພວກເຂົາໃຫ້ນັ່ງຢູ່ເບື້ອງຊ້າຍແລະເບື້ອງຂວາຂອງພຣະອົງ. ແລະຄຳຕອບຂອງພຣະເຢຊູເຈົ້າຄື ພວກເຂົາບໍ່ຮູ້ຈັກໃນສິ່ງທີ່ພວກເຂົາຂໍຊ້ຳ. ຍ້ອນຫຍັງ? ອາດຈະແມ່ນຍ້ອນພວກລູກສິດທັງສອງທີ່ຖາມພຣະເຢຊູເຈົ້ານີ້ບໍ່ໄດ້ຮູ້ຈັກຕົວຕົນທີ່ແທ້ຈິງຂອງພຣະອົງ. ຍ້ອນພວກເຂົາຄິດວ່າ ພຣະເຢຊູເຈົ້າເປັນເໝືອນພຣະແມດຊີອາທີ່ທຸກຄົນໃນອິສຣາແອນລໍຄອຍເພື່ອມາປົດປ່ອຍພວກເຂົາອອກຈາກອຳນາດຂອງການເມືອງ. ແລະທ້າຍສຸດພວກເຂົາທີ່ຕິດຕາມພຣະອົງມາກໍຈະໄດ້ມີສ່ວນໃນອຳນາດແລະຖານະການເມືອງກັບພຣະອົງເຊັ່ນດຽວກັນ. ເພາະສະນັ້ນ, ພວກເຂົາຈຶ່ງຂໍໃຫ້ຜູ້ໜຶ່ງນັ່ງຢູ່ເບື້ອງຊ້າຍແລະຜູ້ໜຶ່ງນັ່ງຢູ່ເບື້ອງຂວາຂອງພຣະອົງ.

ນອກນັ້ນ, ຍັງມີອີກເຫດຜົນໜຶ່ງທີ່ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄຳຕອບຂອງພຣະເຢຊູເຈົ້າທີ່ວ່າ: ພວກເຈົ້າບໍ່ຮູ້ຈັກໃນສິ່ງທີ່ພວກເຈົ້າຂໍຊ້ຳ. ຍ້ອນວ່າກ່ອນທີ່ພວກລູກສິດທັງສອງຄືຢາໂກເບແລະຢວງຈະຖາມພຣະເຢຊູເຈົ້ານັ້ນ ພຣະອົງໄດ້ປະກາດໃຫ້ພວກລູກສິດທັງໝົດຮູ້ກ່ຽວກັບສິ່ງທີ່ຈະເປັນມາກັບພຣະອົງທີ່ນະຄອນເຢລູຊາແລມຄື: ພຣະອົງຈະຕ້ອງຖືກມອບໃຫ້ພວກພຣະສົງແລະນັກກົດໝາຍ, ຖືກກ່າວຫາ, ທໍລະມານແລະຕາຍ. ຈາກນັ້ນວັນທີສາມພຣະອົງຈະກັບເປັນຄືນມາ. ແຕ່ພວກລູກສິດບໍ່ເຂົ້າໃຈໃນສິ່ງທີ່ພຣະອົງກ່າວຊ້ຳ. ສິ່ງນີ້ສະແດງອອກຜ່ານທາງຄຳຖາມຂອງຢາໂກເບແລະຢວງ.

ຕໍ່ໜ້າສະພາບດັ່ງກ່າວແທນທີ່ພຣະເຢຊູເຈົ້າຈະມີຄວາມໂກດຮ້າຍ, ພຣະອົງກັບມີຄວາມພຽນຕໍ່ພວກລູກສິດດ້ວຍການຮຽກພວກເຂົາເຂົ້າມາແລະບອກໃຫ້ພວກເຂົາຮູ້ຢ່າງຈະແຈ້ງວ່າ: ຖ້າພວກເຂົາຢາກເປັນທີໜຶ່ງ ກໍໃຫ້ເປັນຜູ້ສຸດທ້າຍ. ແລະຖ້າພວກເຂົາຢາກເປັນນາຍ ກໍໃຫ້ເປັນຜູ້ຮັບໃຊ້. ຄຳສອນຂອງພຣະເຢຊູເຈົ້ານີ້ບໍ່ພຽງແຕ່ເປັນສິ່ງທີ່ແປກສຳລັບພວກລູກສິດເທົ່ານັ້ນ ແຕ່ສຳລັບພວກເຮົາໃນສະໄໝນີ້ກໍເຊັ່ນດຽວກັນ. ຍ້ອນຫຍັງ? ຍ້ອນພວກເຮົາບໍ່ເຂົ້າຮູ້ຈັກພຣະເຢຊູເຈົ້າຢ່າງຈິງຈັງ. ພຣະອົງເອງເປັນພຣະເຈົ້າແຕ່ຍອມລົງມາເປັນຜູ້ຮັບໃຊ້ພວກເຮົາດ້ວຍການຕາຍເພື່ອບາບຂອງພວກເຮົາ. ແຕ່ວັນທີສາມພຣະອົງໄດ້ກັບເປັນຄືນມາຜູ້ທຳອິດທ່າມກາງພວກຜູ້ຕາຍ. ແລະພຣະອົງຢາກໃຫ້ພວກເຮົາເປັນເໝືອນພຣະອົງຄືເປັນຜູ້ສຸດທ້າຍ, ຜູ້ຮັບໃຊ້ເພື່ອນພີ່ນ້ອງຂອງພວກເຮົາໃນໂລກນີ້ ເພື່ອຈະໄດ້ມີສ່ວນໃນອານາຈັກຂອງພຣະເຈົ້າແລະຢູ່ຮ່ວມກັບພຣະອົງໃນເມືອງສະຫວັນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ